*ຫ້ອງການຊ່ວຍເຫລືອຄົນອົບພະຍົບ ແລະ ຄົນເຂົ້າເມືອງ*
*ພະແນກບໍລິຫານການບໍລິການດ້ານເສດຖະກິດ*

Washington State
Department of Social
& Health Services
*Transforming lives*

# *ລາຍລະອຽດສຳຄັນກ່ຽວກັບການປ່ຽນແປງຕໍ່ກົດລະບຽບຂອງການເຂົ້າເມືອງໃນສະວັດດີການຊ່ວຍເຫລືອສາທາລະນະຊົນ*

ລັດຖະບານກາງໄດ້ເຮັດສຳເຮັດແລ້ວກົດລະບຽບ "ພາລະຂອງສາທາລະນະຊົນ" ຊຶ່ງອາດຈະສະທ້ອນເຖິງໃບຄຳຮ້ອງຂໍເອົາວີຊາຜ່ານແດນຂອງຄົນເຂົ້າເມືອງ, ການອາສັຍຢູ່ຖາວອນ, ຫລື ການເຂົ້າມາປະເທດ **U.S.** ຖ້າຫາກວ່າເຂົາເຈົ້າໄດ້ຮັບສະວັດດີການຊ່ວຍເຫລືອຂອງສາທາລະນະຊົນບາງຢ່າງ. ສານສູງສຸດຂອງ **U.S.** ໄດ້ອະນຸຍາດໃຫ້ກົດລະບຽບທີ່ຈະຖືກວາງໃຊ້, ແລະ ພະແນກການເປັນສັນຊາດ ແລະ ການເຂົ້າເມືອງຂອງ **U.S. (USCIS)** ຈະວາງໃຊ້ກົດລະບຽບໃຫມ່ໃນ <u>ເດືອນເຟບຣູຣີ **24, 2020**</u>**.** ພວກເຮົາໄດ້ກວດເບິ່ງກົດລະບຽບຄືນແລ້ວ ແລະ ຢາກເອົາລາຍລະອຽດທີ່ຖືກຕ້ອງ, ເຊື່ອຖືໄດ້ສຳລັບບຸກຄົນ ແລະ ຄອບຄົວຜູ້ທີ່ອາດຈະຖືກສະທ້ອນເຖິງ.

- ໂຄງການ ແລະ ການບໍລິການທີ່ຖືກບໍລິຫານໂດຍກົມສັງຄົມສົງເຄາະ ແລະ ສາທາລະນະສຸກຂອງລັດວໍຊິງຕັນຈະຍັງຢູ່ຄືເກົ່າ ແລະ ຈະເຂົ້າເຖິງໄດ້ເຖິງປະຊາຊົນຜູ້ທີ່ ມີເງື່ອນໄຂໄດ້ຮັບ.

- **DSHS** ຈະດຳເນີນຕໍ່ໄປເພື່ອຈະປ້ອງກັນການປົກປິດໄວ້ເປັນຄວາມລັບໃນລາຍລະອຽດສ່ວນຕົວຂອງລູກຄ້າ ແລະ ຈະບໍ່ແລກປ່ຽນລາຍລະອຽດອັນນີ້ນອກຈາກວ່າຖືກບັງອອກມາໂດຍກົດຫມາຍຂອງລັດ ຫລື ລັດຖະບານກາງ.

- ພາລະຂອງສາທາລະນະຊົນບໍ່ໄດ້ກ່ຽວເຖິງຄົນເຂົ້າເມືອງທຸກໆຄົນ. ທຸກໆຄອບຄົວແມ່ນແຕກຕ່າງກັນ ແລະ ບຸກຄົນຄວນຈະທຳການເລືອກເອົາທີ່ຖືກຕ້ອງສຳລັບເຂົາເຈົ້າເອງ ແລະ ຄອບຄົວຂອງເຂົາເຈົ້າ, ອີງຕາມສະພາບການອັນເຈາະຈົງຂອງເຂົາເຈົ້າ.
  - ມັນຈະ <u>ບໍ່</u> ສະທ້ອນເຖິງຜູ້ອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ ("ຜູ້ຖືບັດຂຽວ ( ) ຜູ້ທີ່ຮ້ອງຂໍເອົາການເປັນສັນຊາດ ຫລື ການປ່ຽນສັນຊາດຂອງ **U.S.**
  - ມັນຈະ <u>ບໍ່</u> ສະທ້ອນເຖິງຄົນອົບພະຍົບ ແລະ ຄົນລີ້ພັຍ, ຄົນເຂົ້າເມືອງຄົນອາເມີເຣຊຽນ, ຄົນຖືຫນັງສືວີຊາເຂົ້າເມືອງພິເສດຄົນອັຟກັນ ແລະ ຄົນອີຣັກ, ຄົນຄິວບັນ/ ຄົນເຮຕຽນ, ຜູ້ຖືກປ່ອຍຕົວໂດຍມະນຸດສະທັມ, ຜູ້ເຄາະ ຮ້າຍຂອງການຄ້າຄົນເຖື່ອນ **(T-Visa),** ຜູ້ເຄາະຮ້າຍຂອງການເຄື່ອນໄຫວຜິດກົດຫມາຍ **(U-Visa),** ຊາວຫນຸ່ມເຂົ້າເມືອງພິເສດ, ຫລື ຜູ້ຍື່ນຄຳຮ້ອງ **VAWA (Violence Against Women Act).**
  - ມັນ <u>ອາດຈະ</u> ສະທ້ອນເຖິງຜູ້ທີ່ຮ້ອງຂໍເອົາການອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ ("ບັດຂຽວ") ຫລື ການເຂົ້າມາສະຫາລັດອະເມຣິກາ — ລວມທັງຄົນເຂົ້າເມືອງດ້ວຍວີຊາຈົກສະຫລາກນານາຊາດ ແລະ ຄຳຮ້ອງຂໍທີ່ຈະຕໍ່ໃຫມ່, ປ່ຽນແປງ ຫລື ຕໍ່ວີຊາຢູ່ໃນສະຫາລັດອະເມຣິກາ.

- ສະວັດດີການຊ່ວຍເຫລືອຂອງສາທາຣະນະຊົນຫລາຍໆ ຢ່າງບໍ່ແມ່ນພາກສ່ວນນຶ່ງຂອງກົດຣະບຽບໃຫມ່. ຄອບຄົວຄວນຈະສະບາຍໃຈທີ່ຈະດຳເນີນທີ່ຈະໃຊ້ສະວັດດີການຊ່ວຍເຫລືອທີ່ເຂົາເຈົ້າມີເງື່ອນໄຂໄດ້ຮັບທີ່ບໍ່ກ່ຽວພັນນຳພາຍໃຕ້ກົດຣະບຽບໃຫມ່.
  - ກົດຣະບຽບໃຫມ່ອັນນີ້ ຈະ ພິຈາຣະນາເອົາໂຄງການຊ່ວຍເຫລືອເງິນສົດ, ການນອນໂຮງພະຍາບານຣະຍະຍາວ, ແລະ ການປິ່ນປົວສຸຂະພາບຂອງຣັດຖະບານກາງບາງຢ່າງ, ເຄື່ອງບໍຣິໂພກ, ແລະ ການຊ່ວຍເຫລືອເຮືອນຫລວງ. ເພື່ອລາຍຊື່ຂອງສະວັດດີການຊ່ວຍເຫລືອອັນຄົບຖ້ວນ, ຈົ່ງເບິ່ງຄຳຖາມທີ່ຖືກຕາມກັນຢູ່ເລື້ອຍໆ.
  - ກົດຣະບຽບໃຫມ່ອັນນີ້ ຈະບໍ່ ພິຈາຣະນາເອົາສະວັດດີການຂອງຣັດຖະບານກາງອື່ນໆແນວໃດແນວນຶ່ງ. ອັນນີ້ລວມເອົາ WIC, CHIP, ຄາບເຂົ້າທ່ຽງຂອງໂຮງຮຽນ, ຄັງອາຫານ, ບ່ອນຢູ່ອາສັຍ, ແລະ ແນວອື່ນຫລາຍໆແນວອີກ.
  - ບໍ່ມີການປ່ຽນແປງແນວໃດຈະຖືກເຮັດລົງໄປຕໍ່ສະວັດດີ ການຊ່ວຍເຫລືອຂອງຣັດ ແລະ ທ້ອງຖິ່ນທີ່ບໍ່ແມ່ນ ເງິນສົດ.
- ກົດຣະບຽບຈະກ່ຽວກັບຄຳຮ້ອງຂໍເອົາການດັດແປງໃນສະພາບການ, ການຕໍ່ເວລາຂອງການອາສັຍຢູ່ອອກໄປ, ຫລື ການອາສັຍຢູ່ຖາວອນທີ່ຖືກຕຶກາໄປສະນີໃນເດືອນຫລືຫລັງຈາກ ເດືອນເຟບຣູຣີ 24, 2020.
- ກົດຣະບຽບຈະພິຈາຣະນາເບິ່ງສະວັດດີການຊ່ວຍເຫລືອ ທີ່ໄດ້ຮັບໃນເດືອນຫລືຫລັງຈາກ ເດືອນເຟບຣູຣີ 24, 2020. ມັນຈະບໍ່ຖືກໃຊ້ຍ້ອນຄືນຫລັງ ແລະ ບໍ່ສາມາດພິຈາຣະນາເບິ່ງສະວັດດີການຊ່ວຍເຫລືອທີ່ໄດ້ຮັບກ່ອນ ວັນທີນີ້.
- ມັນຈະບໍ່ໄລ່ເອົາການໃຊ້ສະວັດດີການຊ່ວຍເຫລືອໂດຍສະມາຊິກຂອງຄອບຄົວຂອງບຸກຄົນ.ການໃຊ້ສະວັດດີການຊ່ວຍເຫລືອໂດຍເດັກນ້ອຍ ຫລື ສະມາຊິກຄອບຄົວຄົນອື່ນໆຈະບໍ່ຖືກໄລ່ໃສ່ບຸກຄົນຜູ້ທີ່ຮ້ອງຂໍເອົາການອາສັຍຢູ່ຖາວອນ ຫລື ການເຂົ້າມາໃນສະຫາຣັດອະເມຣິກາ.

ຜູ້ທີ່ມີຄຳຖາມ ຫລື ຄວາມຂ້ອງໃຈກ່ຽວກັບຜົນສະທ້ອນຂອງການໃຊ້ສາວັດດີການຊ່ວຍເຫລືອຂອງສາທາຣະນະຊົນໃສ່ສະພາບຂອງການເຂົ້າເມືອງຂອງເຂົາເຈົ້າຄວນຈະຕິດຕໍ່ໄປຫາທະນາຍຄວາມກ່ຽວກັບການເຂົ້າເມືອງ.ແຫລ່ງຊ່ວຍເຫລືອຈະມີໄວ້ໃຫ້ໂດຍຜ່ານນຶ່ງຂອງອົງການທີ່ຖືກບົ່ງຢູ່ໃນແວບໄຊທ໌ຂອງເຈົ້າແຂວງ: https://www.governor.wa.gov/issues/issues/safe-communities/immigration-and-refugee-resources.

ນອກຈາກນັ້ນອີກ, ທ່ານຈະຕິດຕໍ່ຫານຶ່ງຂອງອົງການຕໍ່ລົງໄປນີ້ເພື່ອຄວາມຊ່ວຍເຫລືອ:

- CLEAR ສາຍໂທດ່ວນ: 1-888-201-1014
- ໂຄງການສິດທິຂອງຄົນເຂົ້າເມືອງພາກຕາເວັນຕົກສ່ຽງເຫນືອ(NWIRP):
  - ຫ້ອງການ NWIRP Seattle: 206-587-4009
  - ຫ້ອງການ NWIRP Yakima Valley (Granger): 509-854-2100
  - ຫ້ອງການ NWIRP Wenatchee: 509-570-0054

Washington State
Department of Social & Health Services
Transforming lives

ຖືກພິມອອກມາໃນເດືອນເຟບຣູຣີ 7, 2020